ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະປ່າໄມ້

ຫ້ອງການກະຊວງ

ເລກທີ່ 1675 /ຫກ.ກປ

ນະຄອນຫຼວງວຽງຈັນ, ວັນທີ 21 SEP 2009

# ຫຼັກການປະຕິບັດເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ພາຍໃນຂະແໜງການກະສິກຳ ແລະ ປ່າໄມ້.

## ຄຳນຳ

*ພະນັກງານໃນ ກະຊວງກະສິກຳ ແລະ ປ່າໄມ້ (MAF)* ມີແນວທາງໃນການຈັດຕັ້ງປະຕິບັດເພື່ອຮັບປະກັນໃຫ້ຍິງ-ຊາຍມີສິດທິ ແລະ ໄດ້ຮັບໂອກາດໃນການພັດທະນາຢ່າງເທົ່າທຽມກັນ. ດັ່ງນັ້ນ, ພະນັກງານຍິງ ແລະ ຊາຍ ທຸກຄົນຕ້ອງເຄົາລົບ ແລະ ນຳໃຊ້ກົດໝາຍຂອງຊາດ ແລະ ລະບຽບ/ນະໂຍບາຍຂອງ ກະຊວງກະສິກຳ ແລະ ປ່າໄມ້ໃນການປະຕິບັດໜ້າທີ່ຂອງຕົນເອງສະເໝີ.

ຫຼັກການປະຕິບັດຕໍ່ໄປນີ້ແມ່ນມີຜົນນຳໃຊ້ກັບພະນັກງານທຸກໆຄົນທີ່ເຮັດວຽກໃນກະຊວງກະສິກຳ ແລະປ່າໄມ້ ໃນແຕ່ລະລະດັບຕັ້ງແຕ່ຂັ້ນສູນກາງຈົນຮອດທ້ອງຖິ່ນ. ຫລັກການດັ່ງກ່າວໄດ້ຮັບການຕົກລົງເຫັນດີເປັນ ເອກະພາບຈາກຜູ້ແທນ ຈາກພະແນກກະສິກຳ ແລະ ປ່າໄມ້ໃນທົ່ວປະເທດ (ກອງປະຊຸມທີ່ແຂວງຫລວງພະບາງ ແລະ ແຂວງຈຳປາສັກ ເຊິ່ງຈັດຂຶ້ນ ໃນເດືອນ ເມສາ ປີ 2009) ແລະ ຜູ້ແທນຈາກຂັ້ນກະຊວງກະສິກຳ ແລະ ປ່າໄມ້ (ກອງປະຊຸມທີ່ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງຈັດໃນເດືອນພຶດສະພາ ປີ 2009)

## ສິ່ງທີ່ຄວນປະຕິບັດ

1. ຍິງ-ຊາຍຄວນໄດ້ຮັບໂອກາດໃນການຝຶກອົບຮົມ ແລະຍົກລະດັບຢ່າງເທົ່າທຽມກັນ
2. ຫົວໜ້າຕ້ອງເຊື່ອໝັ້ນໃນການມອບໝາຍຕຳແໜ່ງສຳຄັນ/ຕຳແໜ່ງການນຳໃຫ້ແກ່ແມ່ຍິງ
3. ຍິງ-ຊາຍ ຄວນໄດ້ຮັບເງິນເດືອນ ແລະ ເງິນອຸດໜູນຢ່າງເທົ່າທຽມກັນ
4. ຄອບຄົວ ຫຼື ຜົວຄວນໃຫ້ໂອກາດແມ່ຍິງເຂົ້າຮ່ວມຂະບວນການຕ່າງໆຫລາຍຂຶ້ນ
5. ແມ່ຍິງຄວນນຳເອົາບັນຫາທີ່ພົບພໍ້ໄປນຳສະເໜີຕໍ່ຂັ້ນເທິງດ້ວຍຕົວແມ່ຍິງເອງ(ທາງການ ຫຼື ສ່ວນຕົວ)
6. ແມ່ຍິງຄວນໄດ້ຮັບຄວາມສະເໝີພາບໃນການເຂົ້າຮ່ວມ ແລະ ການຕັດສິນບັນຫາ

7. ຍິງ-ຊາຍຕ້ອງສ້າງຄວາມເປັນເອກະພາບໃນການຄຸ້ມຄອງເສດຖະກິດຄອບຄົວ
8. ແມ່ຍິງຄວນນຸ່ງສິ້ນ, ເສື້ອສຸພາບທຸກຄັ້ງທີ່ໄປງານປະເພນີ ແລະ ງານທາງການ
9. ຄວນມີການປຶກສາຫາລືກ່ອນການແຕ່ງຕັ້ງ ມອບໝາຍວຽກໃຫ້ແກ່ແມ່ຍິງ ເຊັ່ນ: ການຮັບແຂກ, ຮັບໃຊ້ກອງປະຊຸມໃຫຍ່ ຕ່າງໆ.
10. ຄວນມອບວຽກທີ່ແທດເໝາະກັບວິຊາສະເພາະ ຫຼື ຕາມຄວາມສາມາດໃຫ້ແມ່ຍິງ.
11. ແມ່ຍິງຄວນເຮັດວຽກໃນຕຳແໜ່ງການນຳຫຼາຍຂຶ້ນ
12. ຄວນມີງົບປະມານເພື່ອເຄື່ອນໄຫວວຽກງານບົດບາດຍິງ-ຊາຍ
13. ເວລາເຜີຍແຜ່ນະໂຍບາຍຕ່າງໆຄວນເອົາບົດບາດຍິງ-ຊາຍປະສົມປະສານຄຽງຄູ່ກັນໄປນຳ

## ສິ່ງທີ່ບໍ່ຄວນປະຕິບັດ

1. ບໍ່ຄວນຍຶດຖືແນວຄວາມຄິດດັ້ງເດີມທີ່ມີການກີດໜ່ວງຄວາມກ້າວໜ້າຂອງແມ່ຍິງ
2. ຍິງ-ຊາຍ ບໍ່ຄວນດື່ມສິ່ງມືນເມົາໃນໂມງການ ຫຼື ເວລາອາຫານທ່ຽງ
3. ບໍ່ຄວນໃຊ້ສາຍຕາ, ວາຈາ ແລະ ການກະທຳທີ່ເປັນການລວນລາມທາງເພດກັບເພດກົງກັນຂ້າມ
4. ບໍ່ຄວນເວົ້າເຍາະເຍີ້ຍ, ເວົ້ານິນທາທີ່ສຽດສີທາງເພດ ໂດຍສະເພາະຕໍ່ກັບແມ່ຍິງ
5. ແມ່ຍິງບໍ່ຄວນເຮັດວຽກອັດເອກະສານ, ສີດຢາເຄມີ, ເຂົ້າສາງເກັບຢາເຄມີ ໃນເວລາຖືພາ.
6. ແມ່ຍິງບໍ່ຄວນນຸ່ງເຄື່ອງຍົ້ວຍວນຕໍ່ເພດກົງຂ້າມ

## ໝາຍເຫດ

ຖ້າຫາກວ່າຂໍ້ກຳນົດການປະຕິບັດຕໍ່ບົດບາດຍິງ-ຊາຍນີ້ຫາກມີການລະເມີດ, ຫຼື ແມ່ຍິງຮູ້ສຶກວ່າຖືກລ່ວງ ລະເມີດຈະຕ້ອງໄດ້ລາຍງານ ແລະ ສະເໜີຕາມສາຍການຈັດຕັ້ງຂອງຜູ້ກ່ຽວຕາມລຳດັບເຊັ່ນ:

1. ຄວນປຶກສາກັບສະຫະພັນແມ່ຍິງໃນອົງການຈັດຕັ້ງທີ່ຕົນສັງກັດຢູ່
2. ນຳສະເໜີອົງການຈັດຕັ້ງພັກຂອງພະແນກການທີ່ກ່ຽວຂ້ອງ, ຫົວໜ້າຫຼື ຄະນະຂອງໜ່ວຍງານ
3. ສະຫະພັນແມ່ຍິງແຂວງ/ກະຊວງ
4. ນຳສະເໜີອົງຈັດຕັ້ງສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ
5. ໄອຍະການສານ

ຫົວໜ້າຫ້ອງການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ຫ້ອງການ

ດຣ ບຸນທອງ ບົວຫອມ